**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ **3339** /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 05 ທັນວາ 2024

# ແຈ້ງການ

ເຖິງ: ບັນດາຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ.
ເລື່ອງ: ການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ທິດຊີ້ນຳຂອງທ່ານຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຜູ້ຊີ້ນຳກົມການຄ້າຕ່າງປະເທດ ຄັ້ງວັນທີ 09 ສິງຫາ 2024.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ (Certificate of Origin ຫຼື CO) ຂອງບັນດາຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ, ດັ່ງລາຍລະອຽດລຸ່ມນີ້:

1. ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO), ພາຍໃຕ້ຂອບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ ແລະ ສະຫະພາບເອີຣົບ, ນໍອກແວ, ສະວິດເຊີແລນ ແລະ ຕວັກກີ ແມ່ນ ໃຫ້ອອກຜ່ານລະບົບເອເລັກໂຕຣນິກ (www.ecolao.gov.la) ພຽງຊ່ອງທາງດຽວ;
2. ມອບໃຫ້ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ເປັນຜູ້ອອກໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດສິນຄ້າ (CPE) ໃຫ້ທຸກ ບໍລິສັດ/ໂຮງງານ ທີ່ຂໍອອກແບບຟອມນຳບັນດາພະແນກອຸດສາຫະກຳ ແລະ ການຄ້າ ແລະ ສະພາການຄ້າ ແລະ ອຸດສາຫະກຳ ຂັ້ນແຂວງ ແລະ ນະຄອນຫຼວງ;
3. ສະເໜີໃຫ້ຈັດຕັ້ງປະຕິບັດການອອກໃບ CO ຢ່າງເຂັ້ມງວດຂຶ້ນຕື່ມ ໂດຍສະເພາະແມ່ນການປະກອບ ແລະ ເກັບກຳເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຄື:

3.1 ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ຕ້ອງປະກອບເອກະສານ ດັ່ງນີ້:

1) ໃບຄຳຮ້ອງ ຕາມແບບພິມທີ່ ກົມການຄ້າຕ່າງປະເທດ ໄດ້ກຳນົດ;

2) ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ຫຼື ໃບຢັ້ງຢືນແຫຼ່ງທີ່ມາຂອງສິນຄ້າ ສະບັບສຳເນົາ;

3) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ທີ່ຕື່ມຂໍ້ມູນແລ້ວ;

4) ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າສົ່ງອອກ (**Export Invoice and Packing List**);

5) ໃບແຈ້ງພາສີເປັນລາຍລະອຽດ ແລະ ໃບຂົນສົ່ງສິນຄ້າ ໃນກໍລະນີທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແບບຍ້ອນຫຼັງ.

ສຳລັບເອກະສານສະບັບສຳເນົາ ຕ້ອງໄດ້ເຊັນ ແລະ ຈ້ຳກາຮັບຮອງໂດຍ ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

3.2 ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ ຕ້ອງເກັບສຳເນົາເອກະສານປະກອບຂອງແຕ່ລະແບບຟອມໃຫ້ຖືກຕ້ອງ ແລະ ຄົບຖ້ວນ ໃນກໍລະນີ ເອກະສານປະກອບແບບຟອມບໍ່ຄົບ ຫຼື ຍັງບໍ່ໝົດອາຍຸການນຳໃຊ້ ແມ່ນໃຫ້ປະຕິບັດ ດັ່ງນີ້:

1) ຖ້າຫາກແບບຟອມຊຸດໃດທີ່ເອກະສານປະກອບບໍ່ຄົບ ໂດຍສະເພາະແມ່ນໃບແຈ້ງພາສີເປັນລາຍລະອຽດຂາອອກ ແມ່ນໃຫ້ເຈົ້າໜ້າທີ່ທີ່ອອກແບບຟອມດຳເນີນການຍົກເລີກ ໂດຍການສົ່ງໜັງສືແຈ້ງມາຍັງ ກົມການຄ້າຕ່າງປະເທດ ເພື່ອຍົກເລີກຊຸດເອກະສານດັ່ງກ່າວ, ຊຶ່ງໃຫ້ລະບຸຊະນິດແບບ ຟອມ, ເລກທີແບບຟອມ, ລົງວັນທີ ແລະ ລາຍລະອຽດຕ່າງໆມາພ້ອມດ້ວຍ.

2) ສຳລັບແບບຟອມຊຸດໃດທີ່ອອກກ່ອນໜ້ານີ້ທີ່ຍັງມີອາຍຸການນຳໃຊ້ຢູ່ (ໃນໄລຍະເວລາ 03 ປີ) ແມ່ນໃຫ້ເຈົ້າໜ້າທີ່ດຳເນີນການເກັບກຳຄືນ ແລະ ລາຍງານວ່າມີແບບຟອມຈຳນວນຈັກຊຸດທີ່ມີເອກະສານປະກອບຄົບຖ້ວນ ແລະ ມີຈັກຊຸດທີ່ມີເອກະສານປະກອບບໍ່ຄົບຖ້ວນ (ໃຫ້ລະບຸຊະນິດແບບຟອມ, ເລກທີ, ລົງວັນທີ), ຫຼັງຈາກນັ້ນແມ່ນລາຍງານມາຍັງ ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ຢ່າງພ້ອມພຽງກັນ ນັບຕັ້ງແຕ່ວັນທີ **02 ມັງກອນ 2025** ເປັນຕົ້ນໄປ. ຖ້າຫາກຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າໃດ ທີ່ບໍ່ສາມາດປະຕິບັດໄດ້ຕາມແຈ້ງການສະບັບນີ້ແມ່ນ ຈະໄດ້ເຮັດບົດບັນທຶກຕັກເຕືອນ ແລະ ຖ້າຍັງບໍ່ສາມາດແກ້ໄຂຂໍ້ບົກຜ່ອງທີ່ເກີດຂຶ້ນຕາມການປະເມີນຂອງ ກົມການຄ້າຕ່າງປະເທດ ແມ່ນຈະຖືກພິຈາລະນາຕັດສິດໃນການເປັນຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ./.

ຫົວໜ້າຫ້ອງການ

ປອ. ບົວວັນ ວິລະວົງ